HIỆP ĐỊNH
VỀ HỢP TÁC KINH TẾ, VĂN HÓA, KHOA HỌC KỸ THUẬT GIỮA CHÍNH PHỦ NƯỚC CỘNG HÒA XÃ HỘI CHỦ NGHĨA VIỆT NAM VÀ CHÍNH PHỦ NƯỚC CỘNG HÒA DÂN CHỦ NHÂN DÂN LÀO NĂM 2007

Quán triệt tinh thần và nội dung cuộc Hội đàm giữa Bộ Chính trị Đảng Cộng sản Việt Nam và Bộ Chính trị Đảng nhân dân cách mạng Lào ngày 06 tháng 01 năm 2007, tại Thủ đô Hà Nội;

Căn cứ vào Hiệp định về hợp tác kinh tế, văn hóa, khoa học kỹ thuật giữa Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hòa dân chủ nhân dân Lào giai đoạn 2006-2010, ký ngày 04 tháng 01 năm 2006, tại Viêng-chăn;

Nhằm mở rộng và phát triển mối quan hệ hữu nghị và đoàn kết đặc biệt, hợp tác toàn diện giữa nước Cộng hòa xã hội chủ nghĩa Việt Nam và nước Cộng hòa dân chủ nhân dân Lào (sau đây gọi tắt là hai bên);

Hai bên thỏa thuận nội dung, chương trình hợp tác giữa hai nước năm 2007 như sau:

ĐIỀU 1

Điều khoản chung

1. Căn cứ vào Điều 1, điểm 1.1 Hiệp định về hợp tác kinh tế, văn hóa, khoa học kỹ thuật giai đoạn 2006-2010 giữa Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hòa dân chủ nhân dân Lào, ký ngày 04 tháng 01 năm 2006 tại Viêng-chăn, Chính phủ nước Cộng hòa xã hội chủ nghĩa Việt Nam dành cho Chính phủ nước Cộng hòa dân chủ nhân dân Lào khoản viện trợ không hoàn lại năm 2007 trị giá là 180 (một trăm tám mươi) tỷ đồng Việt Nam.

2. Khoản viện trợ nêu trên dành để thực hiện các nội dung hợp tác và công tác đào tạo theo yêu cầu của phía Lào nêu tại Phụ lục số 1 và số 2 của Hiệp định này.

ĐIỀU 2

Lĩnh vực đào tạo và nâng cao chất lượng đào tạo nguồn nhân lực

1. Hai bên tiếp tục thực hiện Nghị định thư về hợp tác đào tạo cán bộ, ký ngày 15 tháng 01 năm 2002.

Chính phủ Việt Nam tiếp tục nhận đào tạo, bồi dưỡng cán bộ và học sinh Lào tại Việt Nam, ở các hệ dài hạn chính quy tập trung bậc đại học, sau đại học, bồi dưỡng ngắn hạn (kể cả quốc phòng, an ninh) và 10 suất học bổng dành cho con, em Việt kiều ở Lào; cử 07 giáo viên Việt Nam sang dạy tiếng Việt cho con em Việt kiều tại Lào; tổ chức các lớp bồi dưỡng kiến thức đối với cán bộ cấp huyện và cán bộ trong lĩnh vực năng lượng-điện, mỏ, quản lý-thẩm định dự án, quy hoạch và kế hoạch... theo yêu cầu phía Lào. Số lượng và cơ cấu ngành nghề học tập cụ thể do phía Lào đề nghị tại Phụ lục số 2 của Hiệp định này.

Chính phủ Lào cấp 25 học bổng đào tạo và bồi dưỡng cán bộ, học sinh Việt Nam sang học tại Lào.

2. Hai bên phối hợp chặt chẽ để nâng cao chất lượng tiếp nhận học sinh, chất lượng đào tạo, bồi dưỡng cán bộ và học sinh mỗi bên, tạo điều kiện dạy và học tiếng Việt tại các trường phổ thông và các trường dân tộc nội trú đã được phía Việt Nam giúp xây dựng ở các địa phương Lào.

Theo đề nghị phía Lào, phía Việt Nam cử 07 giáo viên dạy tiếng Việt cho các trường dân tộc nội trú tại Lào. Đào tạo dự bị một năm tiếng Việt và một năm bổ túc các kiến thức cơ bản đối với học sinh Lào trước khi vào học đại học tại Việt Nam.

3. Hai bên khuyến khích và tạo điều kiện cho học sinh Lào sang học tập tại Việt Nam bằng các nguồn vốn khác ngoài nguồn vốn nêu tại Điều 1, điểm 1 Hiệp định này; khuyến khích hợp tác đào tạo và chuyên môn giữa các cơ sở đào tạo của hai nước ở cấp Trung ương và cấp địa phương.

ĐIỀU 3

Lĩnh vực phát triển bền vững và ổn định vùng biên giới hai nước

Hai bên tiếp tục hợp tác xem xét và nâng cấp hệ thống các cặp cửa khẩu biên giới phù hợp với tình hình phát triển của hai nước; hoàn thành chuẩn bị Dự án "Tăng dày và tôn tạo hệ thống mốc quốc giới Việt Nam-Lào" trên cơ sở nội dung thỏa thuận tại các kỳ họp giữa hai đoàn đại biểu biên giới hai nước và trình hai Chính phủ xem xét, quyết định.

ĐIỀU 4

Lĩnh vực nông, lâm, ngư nghiệp, tài nguyên, môi trường

1. Hai bên phối hợp khuyến khích các doanh nghiệp Việt Nam đầu tư trong các lĩnh vực trồng cây cao su và cây công nghiệp khác, chăn nuôi, sản xuất nông nghiệp, lâm nghiệp, chế biến nông-lâm sản bằng nhiều hình thức, khuyến khích hình thức hợp đồng kinh doanh với các nông hộ Lào; bảo vệ rừng gắn với định canh, định cư, bảo vệ môi trường, sinh thái.

2. Tiếp tục tăng cường hợp tác, trao đổi kinh nghiệm về nông nghiệp, lâm nghiệp, thủy sản, khí tượng thủy văn... giữa hai bên.

ĐIỀU 5

Lĩnh vực văn hóa, thông tin, y tế, xã hội

1. Hai bên phối hợp sớm triển khai biên soạn sách ảnh và các tài liệu lịch sử quan hệ truyền thống hữu nghị, đoàn kết đặc biệt giữa hai dân tộc Việt Nam và Lào để thiết thực chào mừng các ngày kỷ niệm quan hệ hai nước trong năm 2007 và làm tài liệu tuyên truyền, giáo dục nhân dân nhất là thế hệ trẻ.

2. Hai bên tăng cường hợp tác trong lĩnh vực phòng, chống các dịch bệnh lây lan và thực hiện Hiệp định Kiểm dịch y tế biên giới giữa hai nước.

3. Theo yêu cầu của phía Lào, Việt Nam sẵn sàng cử chuyên gia và trao đổi kinh nghiệm về các vấn đề văn hóa, xã hội, việc làm, xóa đói giảm nghèo. Hai bên hợp tác chặt chẽ kiểm soát phòng chống buôn lậu, ma túy qua biên giới hai nước.

4. Hai bên tiếp tục phối hợp tìm kiếm, cất bốc và hồi hương hài cốt các liệt sỹ Việt Nam hy sinh qua các thời kỳ ở Lào.

ĐIỀU 6

Lĩnh vực đầu tư, thương mại, tài chính, ngân hàng, du lịch

1. Hai bên tăng cường hợp tác, tạo điều kiện thuận lợi thúc đẩy trao đổi hàng hóa, tăng kim ngạch thương mại giữa hai nước; tiếp tục thực hiện các cơ chế ưu đãi đã thỏa thuận về thuế suất thuế nhập khẩu đối với hàng hóa có xuất xứ từ hai nước và nghiên cứu mở rộng danh mục các mặt hàng được hưởng thuế suất bằng 0%.

2. Hai bên tiếp tục thực hiện Nghị định thư về trao đổi hàng hóa của cư dân khu vực biên giới Việt Nam-Lào, tăng cường hợp tác tổ chức, quản lý chợ biên giới và phối hợp ngăn chặn các hành vi gian lận thương mại, trốn, lậu thuế, buôn bán trái phép;

- Giao Bộ Thương mại Việt Nam và Bộ Công Thương Lào nghiên cứu trình hai Chính phủ Đề án phát triển thương mại Việt Nam-Lào giai đoạn 2007-2015 với mục tiêu kim ngạch xuất nhập khẩu giữa hai nước năm 2010 là 01 tỷ USD, năm 2015 là 02 tỷ USD;

- Đẩy mạnh việc kiểm tra hàng hóa và phương tiện vận tải hàng hóa theo hình thức "một lần" tại cặp cửa khẩu quốc tế Lao Bảo - Đen-xa-vẳn để phù hợp với quy định của khuôn khổ hợp tác GMS; tiếp tục hợp tác xây dựng mô hình "Khu kinh tế thương mại Lao Bảo - Đen-xa-vẳn";

- Giao Bộ Thương mại Việt Nam và Bộ Công Thương Lào trình hai Chính phủ về sửa đổi, bổ sung Hiệp định Quá cảnh hàng hóa giữa hai nước;

- Việt Nam sẵn sàng giúp Lào trong việc gia nhập Tổ chức Thương mại thế giới (WTO) và Diễn đàn Hợp tác kinh tế Châu Á-Thái Bình Dương (APEC).

3. Tiếp tục phối hợp thực hiện việc thanh toán giữa hai bên bằng tiền kíp Lào (LAK) và đồng Việt Nam (VND).

4. Tiếp tục thúc đẩy hợp tác trong lĩnh vực đầu tư, dành ưu tiên, ưu đãi cao nhất theo tinh thần quan hệ hữu nghị đặc biệt hai nước; tập trung cho công tác tìm kiếm, thăm dò những khoáng sản phục vụ mục tiêu phát triển kinh tế, xã hội và triển khai một số dự án viện trợ và hợp tác đầu tư giữa hai nước trong lĩnh vực khoáng sản, địa chất và năng lượng điện.

5. Theo đề nghị của Việt Nam, phía Lào tiếp tục thực hiện và xem xét việc giảm phí dịch vụ cư trú và việc làm cho phù hợp với thu nhập của lao động Việt Nam làm việc tại Lào.

6. Hai bên tăng cường các hoạt động xúc tiến, quảng bá du lịch; nghiên cứu xây dựng các chương trình du lịch; tạo điều kiện thuận lợi cho công dân hai nước và khách du lịch từ nước thứ ba qua lại bằng các phương tiện đường bộ, đường không; phối hợp với phía Campuchia cùng thực hiện chương trình du lịch "Ba quốc gia, một điểm đến".

ĐIỀU 7

Lĩnh vực kết nối hệ thống hạ tầng hai nước

1. Về giao thông vận tải:

- Việt Nam tiếp tục tạo điều kiện cho Lào sử dụng các tuyến đường ra biển và các cảng biển của Việt Nam; giảm phí sử dụng Cảng Vũng Áng theo thỏa thuận nhằm thu hút hàng quá cảnh của một số nước trong khu vực qua Lào và Việt Nam;

- Hai bên phối hợp điều chỉnh Hiệp định, Nghị định thư vận tải đường bộ và những nội dung có liên quan tại Thỏa thuận Viêng-chăn 2002, phù hợp với các nội dung đã được ký kết trong khuôn khổ Tiểu vùng sông Mê Công mở rộng (GMS) và tình hình thực tiễn của mỗi nước.

- Hai bên khuyến khích và tạo điều kiện hợp tác liên doanh giữa Hãng Hàng không quốc gia Việt Nam và Hãng Hàng không quốc gia Lào và các dịch vụ bay giữa hai nước; nghiên cứu đề xuất của phía Lào về việc mở đường bay trực tiếp khứ hồi Hà Nội - Pắc-xế;

- Hai bên phối hợp đề xuất phương thức đầu tư cụ thể cho Dự án cải tạo, nâng cấp tuyến đường 2E (Mường Khoa-Tây Trang) vùng Đông Bắc Lào nhằm tạo điều kiện thuận lợi cho việc qua lại.

2. Về năng lượng-điện:

- Phía Việt Nam tiếp tục thực hiện cung ứng điện cho Lào tại các khu vực dọc biên giới Việt Nam-Lào theo các hợp đồng đã ký kết trong tháng 9 và tháng 12 năm 2006 giữa Bộ Công nghiệp Việt Nam và Bộ Năng lượng và Mỏ Lào; xem xét khả năng bán điện cho một số khu vực khác theo yêu cầu của phía Lào.

- Tiếp tục tạo điều kiện cho các doanh nghiệp Việt Nam thực hiện các Dự án đầu tư xây dựng thủy điện Xê-ca-mản 3, Cụm dự án Xê-ca-mản 1 bao gồm cả Dự án Xê-ca-mản Xan-xay (Xê-ca-mản 0) và chuẩn bị các dự án đầu tư xây dựng thủy điện Xê-ca-mản 4, Nặm-cắn, Đăk Y Mơn, Xê-công 3 đã thỏa thuận;

- Hai bên tiếp tục hợp tác nghiên cứu xây dựng các trạm và hệ thống kết nối đường dây tải điện 115 KV từ Xê-ca-mản 3 đi tỉnh Xê-công và Xê-ca-mản 1 đi tỉnh At-ta-pư; tìm nguồn vốn xây dựng trạm 500 KV ở At-ta-pư và đường dây tải điện 500 KV giữa hai nước;

- Sớm triển khai thực hiện Hiệp định hợp tác phát triển năng lượng điện và mỏ ký ngày 19 tháng 12 năm 2006 tại Viêng-chăn.

3. Về viễn thông: Hai bên tạo điều kiện thuận lợi cho hợp tác liên doanh giữa Tổng công ty Viễn thông Việt Nam (Viettel) và các công ty Viễn thông Lào.

ĐIỀU 8

Nâng cao năng lực và duy trì các chương trình, dự án hợp tác

1. Tiếp tục duy trì, củng cố và nâng cao năng lực các chương trình, dự án hợp tác giữa hai nước trong các giai đoạn trước đây nhằm phát huy hiệu quả bền vững của chương trình, dự án;

2. Hai bên đôn đốc hoàn thành dứt điểm, đồng bộ một số dự án, chương trình đã được bố trí đủ vốn đầu tư từ những năm trước đây để đưa vào khai thác sử dụng như: hệ thống thủy lợi Đông-phô-xỉ, hệ thống thuỷ lợi Thà-phạ-noọng-phông; hệ thống thủy lợi Nặm-loong; chương trình phát triển nông nghiệp và nông thôn Chăm-pa-xắc; Dự án xây dựng Đài phát hình chuyển tiếp khu vực Chăm-pa-xắc; Dự án cải tạo, nâng cấp Trường Chính trị-Hành chính quốc gia Thà-ngòn giai đoạn 1; Dự án Trung tâm Đo lường quốc gia Lào...

3. Hai bên xem xét và quyết định bổ sung đồng bộ đối với một số dự án do phải điều chỉnh mục đích sử dụng... nhằm phát huy hiệu quả và duy trì hoạt động dự án.

ĐIỀU 9

Phối hợp cơ chế chính sách hợp tác

1. Hai bên phối hợp hoàn chỉnh Quy trình quản lý các chương trình, dự án sử dụng vốn viện trợ không hoàn lại của Việt Nam dành cho Lào phù hợp với cơ chế, chính sách hiện hành của mỗi nước nhằm đảm bảo quản lý dự án chặt chẽ và tạo điều kiện thuận lợi triển khai nhanh và dứt điểm sớm đưa công trình vào sử dụng.

Hai bên tiếp tục thực hiện nguyên tắc sử dụng vốn viện trợ của Việt Nam dành cho Lào đã được thoả thuận. Theo đó, các Bộ, ngành, địa phương, tổ chức, đoàn thể muốn được sử dụng nguồn viện trợ của Việt Nam dành cho Lào phải có đồng ý của hai Chính phủ trước khi ký kết. Khuyến khích các Bộ, ngành, địa phương, tổ chức và đoàn thể tiếp tục hợp tác giúp đỡ lẫn nhau theo điều kiện và khả năng thực tế của ngành, địa phương và đơn vị mình.

2. Thực hiện và thường xuyên bổ sung một số nội dung của Thỏa thuận Viêng-chăn 2002 cho phù hợp với tình hình thực tế của mỗi nước; tăng cường vai trò trung tâm, tổng hợp, điều phối các lĩnh vực hợp tác của hai Phân ban Hợp tác Lào-Việt Nam và Việt Nam-Lào; giải quyết nhanh, dứt điểm những vấn đề nảy sinh vướng mắc liên quan đến hợp tác giữa hai nước.

3. Phối hợp thực hiện các cam kết và có sự đồng thuận trong các chương trình hợp tác thuộc khuôn khổ ASEAN, GMS, MRC, ACMECS, CLV, CLV+J, CLMV... vào mục tiêu phát triển và hợp tác của hai nước.

ĐIỀU 10

Điều khoản thi hành

Hiệp định có hiệu lực từ ngày ký đến ngày Hiệp định kế tiếp được ký kết. Trong thời gian thực hiện Hiệp định này, có thể được bổ sung, sửa đổi theo sự thỏa thuận bằng văn bản của Chính phủ hai nước. Các Phụ lục số 1, 2 và 3 là bộ phận không tách rời nội dung Hiệp định.

Làm tại Thủ đô Hà Nội, ngày 07 tháng 01 năm 2007 thành hai bản bằng tiếng Việt và tiếng Lào, cả hai bản đều có giá trị như nhau./.

TM. CHÍNH PHỦ NƯỚC CỘNG HÒA XÃ HỘI CHỦ NGHĨA VIỆT NAM	**TM. CHÍNH PHỦ NƯỚC CỘNG HÒA DÂN CHỦ NHÂN DÂN LÀO**
NGUYỄN SINH HÙNG	**XỔM-XÀ-VẠT LỀNH-XA-VÁT**
Phó Thủ tướng Thường trực	**Phó Thủ tướng Thường trực**

Phụ lục 1

KẾ HOẠCH KINH PHÍ NĂM 2007 CHO CÁC DỰ ÁN, CÔNG VIỆC HỢP TÁC

Đơn vị tính: triệu VNĐ

STT	Danh mục	Số tiền	Ghi chú
	Tổng số tiền viện trợ năm 2007	**180.000**	
a	**Các dự án, công việc chuyển tiếp**		
01	Chi đào tạo cán bộ, học sinh Lào học tập tại Việt Nam và 10 suất học bổng dành cho con Việt kiều	95.000	*Ngành, nghề và hệ học được nêu cụ thể ở Phụ lục 2 Hiệp định này*
02	Đào tạo cán bộ tài chính tại Lào	1.000	
03	Bổ sung và hoàn thiện Trường Dạy nghề tại tỉnh Bò-kẹo	10.000	
04	Hoàn thành Trường Năng khiếu và Dự bị đại học Viêng-chăn	11.000	
05	Hoàn thành điều tra đánh giá bô-xít và các khoáng sản khác ở Nam Lào	5.000	
b	**Các dự án chuẩn bị và thực hiện ngay trong năm 2007**	**58.000**	
01	Xây dựng Trường Tài chính Đồng-khăm-xạng, Viêng-chăn	20.000	2007-2009
02	Xây dựng Trung tâm Huấn luyện thể thao quốc gia Lào (Viêng-chăn)	15.000	2007-2008 (04 triệu USD)
03	Sửa chữa, nâng cấp Bảo tàng Chủ tịch Cay-xỏn Phôm-vi-hản	15.000	*Hoàn thiện dứt điểm công trình*
04	Biên soạn sách ảnh truyền thống, quan hệ đặc biệt Việt-Lào *(phần công việc do phía Lào đảm nhiệm)*	1.000	*Phần công việc VN đảm nhiệm dùng vốn hỗ trợ hợp tác*
05	Biên dịch sách kinh điển Mác-Ăng ghen-Lê nin và Tư tưởng Hồ Chí Minh sang tiếng Lào	2.000	2007-2010
07	Nâng cao năng lực ngành Tòa án Lào	2.000	2007-2008
08	Nâng cao năng lực ngành Cơ yếu	3.000	2007-2008

Những dự án thực hiện giai đoạn chuẩn bị dự án trong năm 2007 để làm cơ sở xem xét đưa vào kế hoạch hợp tác hàng năm (*)

01	Xây dựng Trường chuyên phổ thông trung học Thủ đô Viêng-chăn *(Quà tặng của Tổng Bí thư)*		
02	Trung tâm Lưu trữ quốc gia		2007-2010
03	Trường Cao đẳng nghệ thuật quốc gia Viêng-chăn		2007-2010
04	Trung tâm Kỹ thuật hình sự Bộ Công an tại Viêng-chăn		2007-2008
05	Đầu tư xây dựng một số hạng mục *(Giảng đường, phòng thí nghiệm, ký túc xá)* Trường Đại học Y Viêng-chăn		2007-2009
06	Quy hoạch phát triển thủy sản Lào		2007-2010
07	Phân vùng nông nghiệp Lào		2007-2010
08	Xây dựng cơ sở dữ liệu địa lý quốc gia Lào để quản lý tài nguyên		2007-2010
09	Chuẩn bị dự án tuyến đường sắt Thà-khẹc -Mụ-giạ		2007-2010 (70.000 USD)

(*): Mỗi dự án tạm bố trí 300 triệu VNĐ từ nguồn kinh phí hỗ trợ hợp tác của Việt Nam.

Phụ lục số 2

KH ĐÀO TẠO, BỒI DƯỠNG CÁN BỘ, HỌC SINH LÀO TẠI VIỆT NAM NĂM 2007

Ngành và lĩnh vực đào tạo	Tổng số	ĐT dài hạn			ĐT ngắn hạn		Ghi chú	
		ĐH	CH	NCS	Số lượng	Thời gian	Cán bộ	Học sinh
I. Chính tri và đoàn thể	**131**		**15**	**7**	**109**		"	
1. Lý luận chính tri	40		15	5	20	5 tháng	"	
2. Quản lý Nhà nước	22			2	20	3 tháng	"	
3. Mặt trận Lào XD đất nước	18				18	3 tháng	"	
4. Công tác tổ chức	17				17	3 tháng	"	
5. Công tác tuyên huấn	17				17	3 tháng	"	
6. Công tác công đoàn	17				17	3 tháng	"	
II. Lĩnh vực Quốc phòng-An ninh	**170**							
1. Quốc phòng	100							
2. An ninh	70							
III. Cao học và NCS	**66**		**46**	**20**				
1. Lĩnh vực giáo dục	***14***		***9***	***5***			*Cán bộ*	
Quản lý giáo dục	2		1	1			"	
Kỹ thuật	2		1	1			"	
Hoá học	1		1					
Địa lý	1		1					
Toán học	2		1	1				
Sinh học	1		1					
Văn học	2		1	1				
Vật lý	1		1					
Lịch sử	2		1	1				
2. Nông-lâm nghiệp	***4***		***3***	***1***				
Nông lâm nghiệp	1		1					
Phân loại giống cây trồng	1		1					
Quản lý sử dụng thuỷ lợi	1			1				
Chăn nuôi	1		1					
3. Công nghiệp-thương mại	***6***		***3***	***3***				
Kinh tế thương mại	2		1	1				
Quản lý công nghiệp	1			1				
Luật thương mại	1		1					
Kinh tế học (Quản lý kinh doanh)	2		1	1				
4. Ngành kế hoạch	***2***		***1***	***1***				
Lập KH và quản lý Kinh tế kế hoạch	2		1	1				
5. Lưu trữ nhà nước	***1***		***1***					
Khoa học xã hội nhân văn	1		1					
6. Ngân hàng	***4***		***3***	***1***				
Tài chính ngân hàng	3		2	1				
Ngân hàng	1		1					
7. Thông tin văn hoá	***3***		***2***	***1***				
Phóng viên	1		1					
Thông tin đại chúng	2		1	1				

8. Năng lượng, mỏ	***7***		***6***	***1***				
Mỏ địa chất	3		2	1				
Quản lý môI trường	1		1					
Công nghiệp điện	2		2					
Thăm dò khoáng sản	1		1					
9. Ngành tư pháp	***4***		***3***	***1***				
Luật	4		3	1				
10. Ngành ngoại giao	***4***		***4***					
Quan hệ quốc tế	3		3					
Luật quốc tế	1		1					
11. Tài chính	***8***		***6***	***2***				
ngành tài chính	5		4	1				
Kinh tế tài chính	3		2	1				
12. Ytế	***5***		***3***	***2***				
Y học cổ truyền	1			1				
An toàn thực phẩm	1		1					
Quaản lý cây thuốc	1		1					
Khoa học ytế	1			1				
Tai mũi họng	1		1					
13. Giao thông, bưu điện	***4***		***2***	***2***				
Bưu chính	3		1	2				
Kiến trúc sư-cầu đường	1		1					
IV. Giáo dục, văn hoá, toà án	**60**							
1. Phương pháp giảng dạy toán cấp 1	15				15	3Tháng	Cán bộ	
2. Quaản lý giáo dục trong trường học	15				15	3 tháng	"	
3. Công tác toà án ND tối cao	15				15	3 tháng	"	
4. Công tác kế hoạch	15				15	3 tháng	"	
V. Dư bị tiếng Việt để học đại học	**173**							
1. Công tác tổ chức tại HV Khu vực 1	20	20					Cán bộ	
2. Công tác chính trị (HV Báo chí TT)	20	20					"	
3. Hành chính (HV Hành chính QG)	20	20					"	
4. Ngành nông nghiệp	***9***	***9***						
Thuỷ lợi	2	2						
Sâu bệnh	2	2						
Thuú y	2	2						
Khí tượng thuỷ văn	1	1						
Chăn nuôi	2	2						
5. Năng lượng, mỏ	***30***	***30***						
Thăm dò khoáng sản	5	5						
Chế biến khoáng sản	5	5						
Khai thác khoáng sản	5	5						
Phân tích khoáng sản	5	5						
Nhiệt điện	3	3						
Thuỷ điện	4	4						
Quaản lý kinh tế năng lượng	3	3						
6. Ngành kế hoạch	***2***	***2***						
Thống kê	2	2						

7. Ngành thông tin văn hoá	***9***	***9***						
Phóng viên	4	4						
In ấn phát hành	3	3						
Mỹ thuật	2	2						
8. Thương mại-công nghiệp	***16***	***16***						
Quaản trị kinh doanh	2	2						
Luật thương mại	3	3						
Kinh tế thương mại	3	3						
Ngoại thương	3	3						
Lập kế hoạch công nghiệp	2	2						
Công nghiệp chế biến	3	3						
9. Du lịch dịch vụ	***6***	***6***						
Quaản lý du lịch	2	2						
Kinh tế du lịch	2	2						
Du lịch và khách sạn	2	2						
10. Ngân hàng	***6***	***6***						
Ngân hàng	3	3						
Tín dụng và TT chứng khoán	3	3						
11. Ngành ngoại giao	***9***	***9***						
Phiên dịch tiếng Việt Nam	4	4						
Luật quốc tế	3	3						
Quan hệ kinh tế quốc tế	2	2						
12. Công đoàn	***4***	***4***						
13. Ngành tổng hợp	***6***	***6***						
Lưu trữ	3	3						
Cơ yếu	3	3						
14. Ngành Ytế	***6***	***6***						
Y học cổ truyền	2	2						
Quản lý vệ sinh	2	2						
Phân tích	2	2						
15. Ngành GTVT, Bưu điện và XD	***8***	***8***						
Vận tải đường bộ, đường thủy	4	4						
Bưu chính	2	2						
Kiến trúc-cầu đường	2	2						
16. Ngành giáo dục	***12***	***12***						
Giáo dục thể chất	2	2						
Việt kiều	10	10						
Cộng	**610**							

Phụ lục số 3

Dự kiến các dự án sử dụng vốn viện trợ của Chính phủ Việt Nam dành cho Chính phủ Lào giai đoạn 2008-2010

Đơn vị tính: triệu VNĐ

STT	Chuẩn bị và thực hiện các dự án	Số tiền	Ghi chú
01	Xây dựng Đài chuyển tiếp hình Đài Truyền hình Lào tại Chăm-pa-xắc		Các dự án của Phụ lục này sẽ được xem xét 2008-2010
02	Mở rộng khảo sát, đánh giá muối mỏ tỉnh Khăm-muộn		
03	Triển khai đầu tư xây dựng đoạn đường Tén Tần- Xổm Vẳng		
04	Xây dựng Khoa Tiếng Việt Trường Đại học quốc gia Viêng-chăn		
05	Xây dựng Trường Dân tộc nội trú tỉnh Xiêng-khoảng		
06	Xây dựng Trường Dân tộc nội trú tỉnh Hủa-phăn		
07	Nâng cấp Học viện Chính trị-Hành chính quốc gia Thà-ngòn giai đoạn 2		

ສັນຍາ

ວ່າດ້ວຍການຮ່ວມມື ດ້ານ ເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳປີ 2007

ປະຕິບັດຕາມຈິດໃຈ ແລະ ເນື້ອໃນ ຂໍ້ຕົກລົງ ຂອງການພົບປະ ລະຫວ່າງ ກົມການເມືອງສູນກາງພັກ ປະຊາຊົນປະຕິວັດລາວ ແລະ ກົມການເມືອງສູນກາງພັກຄອມມູນິດຫວຽດນາມ, ຄັ້ງວັນທີ 06 ມັງກອນ (01) ປີ 2007 ທີ່ນະຄອນຫລວງ ຮ່າໂນ້ຍ.

ອີງຕາມສັນຍາ ວ່າດ້ວຍການຮ່ວມມື ດ້ານ ເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ໄລຍະ 2006 - 2010 ທີ່ໄດ້ເຊັນກັນຄັ້ງວັນທີ 04 ມັງກອນ (01) ປີ 2006 ທີ່ ນະຄອນຫລວງວຽງຈັນ.

ເພື່ອເປີດກ້ວາງ ແລະ ເພີ້ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ, ການຮ່ວມມືຮອບ ດ້ານ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ (ຕໍ່ໄປນີ້ເອີ້ນຫຍໍ້ວ່າສອງຝ່າຍ).

ສອງຝ່າຍໄດ້ຕົກລົງກ່ຽວກັບເນື້ອໃນ ແລະ ແຜນການຮ່ວມມື ລະຫວ່າງ ສອງປະເທດ ປະຈຳປີ 2007 ດັ່ງລຸ່ມນີ້:

ມາດຕາ 1:
ຂໍ້ກຳນົດທົ່ວໄປ

1. ອີງຕາມເນື້ອໃນທີ່ໄດ້ລະບຸໄວ້ ໃນມາດຕາ 1 ຂໍ້ 1.1 ຂອງ ສັນຍາ ວ່າດ້ວຍການຮ່ວມມືດ້ານ ເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ໄລຍະປີ 2006 - 2010 ລະຫວ່າງ ລັດຖະບານສາທາ ລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ເຊິ່ງ ໄດ້ລົງນາມກັນ ຄັ້ງວັນທີ 04 ມັງກອນ (01) ປີ 2006 ທີ່ນະຄອນຫລວງວຽງຈັນ, ລັດຖະບານສາທາລະ

ນະລັດສັ່ງຄົມນິຍົມຫວຽດນາມໃຫ້ການຊ່ວຍເຫຼືອລ້ຳໂດຍບໍ່ຫິດແທນຄືນໃຫ້ແກ່ລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປີ 2007 ຈຳນວນເງິນ 180 (ໜຶ່ງຮ້ອຍແປດສິບ) ຕື້ດົ່ງຫວຽດນາມ.

2. ບ້ວງເງິນດັ່ງກ່າວ ຈະໄດ້ນຳໃຊ້ເຂົ້າໃນການປະຕິບັດບັນດາເນື້ອໃນການຮ່ວມມື ແລະ ການກໍ່ສ້າງ ພະນັກງານຕາມຄວາມຕ້ອງການ ຂອງຝ່າຍລາວ ເຊິ່ງໄດ້ລະບຸໄວ້ໃນສາລະບານເລກ 1 ແລະ ເລກ 2 ຂອງ ສັນຍາສະບັບນີ້.

ມາດຕາ 2

ຂົງເຂດການກໍ່ສ້າງ ແລະ ຍົກສູງຄຸນນະພາບການກໍ່ສ້າງຊັບພະຍາກອນມະນຸດ.

1. ສອງຝ່າຍສືບຕໍ່ປະຕິບັດອະນຸສັນຍາວ່າດ້ວຍການຮ່ວມມື ດ້ານການກໍ່ສ້າງພະນັກງານ ທີ່ໄດ້ເຊັນ ກັນຄັ້ງວັນທີ 15 ເດືອນ ມັງກອນ (01) ປີ 2002.

ລັດຖະບານຫວຽດນາມ ສືບຕໍ່ຮັບກໍ່ສ້າງ, ບຳລຸງພະນັກງານ, ນັກສຶກສາລາວຢູ່ຫວຽດນາມ, ຮຽນລະ ບົບໄລຍະຍາວ ຕາມຫລັກສູດປົກກະຕິ ຂັ້ນມະຫາວິທະຍາໄລ, ເໜືອມະຫາວິທະຍາໄລ ແລະ ລະບົບ ບຳລຸງໄລຍະສັ້ນ (ນັບທັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ) ແລະ ຈຳນວນ10 ທຶນ ໃຫ້ລູກຫລານຊາວ ຫວຽດນາມຕ່າງດ້າວຢູ່ລາວ; ສົ່ງຄູອາຈານຫວຽດນາມຈຳນວນ 07 ຄົນ ມາສອນພາສາຫວຽດໃຫ້ແກ່ລູກ ຫລານ ຊາວຫວຽດນາມຕ່າງດ້າວຢູ່ລາວ; ຈັດຕັ້ງຊຸດບຳລຸງຍົກລະດັບຄວາມຮູ້ດ້ານຕ່າງໆ ໃຫ້ແກ່ພະນັກງານ ຂັ້ນເມືອງ,ກໍ່ສ້າງພະນັກງານຂົງເຂດພະລັງງານແລະບໍ່ແຮ່, ພະນັກງານຄຸ້ມຄອງ ແລະ ປະເມີນຜົນໂຄງການ, ແຜນແມ່ບົດແລະແຜນການຕາມຄວາມຕ້ອງການຂອງຝ່າຍລາວ. ຈຳນວນ ແລະ ໂຄງປະກອບຂະແໜງ ວິຊາລະອຽດໂດຍແມ່ນຝ່າຍລາວໄດ້ສະເໜີຕາມ ສາລະບານເລກ 2 ຂອງສັນຍາສະບັບນີ້.

ລັດຖະບານລາວ ຮັບ ກໍ່ສ້າງ ແລະ ບຳລຸງພະນັກງານ, ນັກສຶກສາຫວຽດນາມຢູ່ລາວຈຳນວນ25 ທຶນ.

2. ສອງຝ່າຍເປັນເອກະພາບປະສານສົມທົບຢ່າງແໜ້ນແຟ້ນ ເພື່ອຍົກສູງຄຸນນະພາບ ໃນການຮັບ ນັກສຶກສາ, ຄຸນນະພາບການກໍ່ສ້າງ, ບຳລຸງພະນັກງານ - ນັກສຶກສາ ຂອງແຕ່ລະຝ່າຍ, ສ້າງເງື່ອນໄຂໃຫ້ແກ່ ການສອນ ແລະ ການຮຽນພາສາຫວຽດ ຢູ່ບັນດາໂຮງຮຽນສາມັນ ແລະ ໂຮງຮຽນກິນນອນຊົນເຜົ່າຢູ່ລາວ ທີ່ ຝ່າຍຫວຽດນາມໄດ້ໃຫ້ການຊ່ວຍເຫລືອສ້າງຂຶ້ນຢູ່ທ້ອງຖິ່ນຕ່າງໆຂອງລາວ.

ຕາມການສະເໜີຂອງຝ່າຍລາວ; ຝ່າຍຫວຽດນາມຕົກລົງສົ່ງອາຈານສອນພາສາຫວຽດນາມຈຳນວນ 07ຄົນໃຫ້ແກ່ບັນດາໂຮງຮຽນກິນນອນຊົນເຜົ່າ. ໃຫ້ນັກສຶກສາລາວຮຽນກຽມເພື່ອເຂົ້າຮຽນມະຫາວິທະຍາໄລ ຢູ່ຫວຽດນາມໃນໄລຍະ 02ປີ, (ໃນນັ້ນຮຽນພາສາຫວຽດໜຶ່ງປີ ແລະ ອີກໜຶ່ງປີຮຽນບຳລຸງຄວາມຮູ້ພື້ນຖານ).

3. ສອງຝ່າຍສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ນັກຮຽນລາວໄປຮຽນຢູ່ຫວຽດນາມ ດ້ວຍແຫລ່ງອື່ນໆ

ນອກຈາກແຫລ່ງທຶນທີ່ໄດ້ລະບຸໄວ້ໃນ ມາດຕາ1, ຂໍ້ 1 ຂອງສັນຍາສະບັບນີ້; ສົ່ງເສີມການຮ່ວມມື ດ້ານການກໍ່ສ້າງ ແລະ ວິຊາການ ລະຫວ່າງ ບັນດາສະຖາບັນການສຶກສາຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຂອງສອງປະເທດ.

ມາດຕາ 3:

ຂົງເຂດການພັດທະນາ

ເຂດຊາຍແດນ ລະຫວ່າງ ສອງປະເທດ ໃຫ້ຍືນຍົງ ແລະ ມີສະຖຽນລະພາບ

ສອງຝ່າຍສືບຕໍ່ຮ່ວມມືພິຈາລະນາ ແລະ ຍົກລະດັບລະບົບດ່ານຊາຍແດນໃຫ້ສອດຄ່ອງກັບສະພາບການພັດທະນາຂອງສອງປະເທດ; ສຳເລັດການກະກຽມໂຄງການ " **ປັກຫລັກໝາຍຖີ ແລະ ສ້ອມແປງ ບູລະນະ ລະບົບຫລັກໝາຍຊາຍແດນປະເທດລາວ - ຫວຽດນາມ** ". ບົນພື້ນຖານເນື້ອໃນ ທີ່ໄດ້ຕົກລົງກັນໃນກອງປະຊຸມ ລະຫວ່າງ ຄະນະຜູ້ແທນຄະນະກຳມະການຊາຍແດນຂອງສອງປະເທດ ເພື່ອນຳສະເໜີ ລັດຖະບານ ຂອງສອງປະເທດພິຈາລະນາຕົກລົງ.

ມາດຕາ 4

ຂົງເຂດ ກະສິກຳ, ປ່າໄມ້, ການປະມົງ, ຊັບພະຍາກອນ, ສິ່ງແວດລ້ອມ

1. ສອງຝ່າຍປະສານສົມທົບສົ່ງເສີມບັນດາຫົວໜ່ວຍທຸລະກິດຫວຽດນາມ ມາລົງທຶນໃນຂົງເຂດຕ່າງໆ: ປູກຕົ້ນຢາງພາລາ ແລະ ຕົ້ນໄມ້ອຸດສາຫະກຳອື່ນໆ, ການປູກຝັງ, ລ້ຽງສັດ, ການຜະລິດກະສິກຳ - ປ່າໄມ້, ການປຸງແຕ່ງຜະລິດຕະພັນ ກະສິກຳ - ປ່າໄມ້ ດ້ວຍຫລາຍຮູບການ, ສົ່ງເສີມຮູບການຜູກພັນຮ່ວມມືທຸລະກິດ ກັບບັນດາຄອບຄົວຊາວກະສິກອນລາວ. ເອົາໃຈໃສ່ປົກປັກຮັກສາປ່າໄມ້ ຕິດພັນກັບການຈັດຕັ້ງພູມລຳເນົາຄົງທີ່ , ປົກປັກຮັກສາສິ່ງແວດລ້ອມ ຊີວະນາໆພັນ.

2. ສືບຕໍ່ເພີ່ມທະວີ ການຮ່ວມມືແລກປ່ຽນບົດຮຽນ ດ້ານ ກະສິກຳ - ປ່າໄມ້, ການປະມົງ, ອຸຕຸນິຍົມ-ອຸທົກກະສາດ ... ລະຫວ່າງ ສອງຝ່າຍ.

ມາດຕາ 5

ຂົງເຂດວັດທະນະທຳ - ຖະແຫລງຂ່າວ, ສາທາລະນະສຸກ, ສັງຄົມ

1. ສອງຝ່າຍປະສານສົມທົບ ຜັນຂະຫຍາຍການຄົ້ນຄ້ວາ ຮຽບຮຽງກ່ຽວກັບປຶ້ມ, ຮູບພາບ ແລະ ບັນດາເອກະສານປະຫວັດສາດ ແຫ່ງການພົວພັນມິດຕະພາບ ທີ່ເປັນມູນເຊື້ອ, ຄວາມສາມັກຄີພິເສດ ລະຫວ່າງ

ສອງຊາດລາວ - ຫວຽດນາມໂດຍໄວ ເພື່ອສະເຫລີມສະຫລອງບັນດາວັນສຳຄັນແຫ່ງການພົວພັນ ລະຫວ່າງ ສອງປະເທດໃນປີ 2007 ແລະ ສ້າງເປັນເອກະສານເພື່ອໂຄສະນາ, ສຶກສາອົບຮົມປະຊາຊົນສອງປະເທດ ໂດຍສະເພາະ ແມ່ນຄົນຮຸ່ນໃຫມ່ ຢ່າງມີຜົນຕົວຈິງ.

2. ສອງຝ່າຍເພີ່ມທະວີການຮ່ວມມືໃນຂົງເຂດການປ້ອງກັນ ແລະ ຕ້ານພະຍາດລະບາດ; ພ້ອມກັນ ປະຕິບັດສັນຍາວ່າດ້ວຍການກວດກາແລະຄວບຄຸມພະຍາດລະບາດຜ່ານຊາຍແດນ ລະຫວ່າງ ສອງປະເທດ ທີ່ໄດ້ເຊັນກັນໃຫ້ໄດ້ຮັບຜົນດີ.

3. ຕາມຄວາມຕ້ອງການຂອງຝ່າຍລາວ, ຝ່າຍຫວຽດນາມກຽມພ້ອມສິ່ງຊ່ຽວຊານມາຊ່ວຍລາວ ແລະ ສອງຝ່າຍແລກປ່ຽນບົດຮຽນກ່ຽວກັບບັນຫາ ວັດທະນະທຳ - ສັງຄົມຕ່າງໆ, ບັນຫາວຽກເຮັດງານທຳ, ການຫລຸດຜ່ອນຄວາມທຸກຍາກ. ສອງຝ່າຍຮ່ວມມືຢ່າງແໜ້ນແຟ້ນ ໃນການກວດກາສະກັດກັ້ນການຄ້າຂາຍ ຢາເສບຕິດ ແລະ ການຄ້າຂາຍເຖື່ອນຜ່ານຊາຍແດນສອງປະເທດ.

4. ສອງຝ່າຍສືບຕໍ່ຊອກຄົ້ນ, ເກັບກູ້, ທ້ອນໂຮມອັດຖິ ຂອງທະຫານອາສາສະໝັກຫວຽດນາມ ທີ່ເສຍສະຫລະຊີວິດໃນປາງສົງຄາມຢູ່ລາວ ເພື່ອຈັດສົ່ງກັບຄືນປະເທດ.

ມາດຕາ 6

ຂົງເຂດການຄ້າ, ການລົງທຶນ, ການເງິນ, ທະນາຄານ, ການທ່ອງທ່ຽວ

1. ສອງຝ່າຍເພີ້ມທະວີການຮ່ວມມື, ສ້າງເງື່ອນໄຂສະດວກ ຊຸກຍູ້ການແລກປ່ຽນສິນຄ້າ, ເພີ້ມມູນ ຄ່າການຄ້າ ລະຫວ່າງ ສອງປະເທດ; ສືບຕໍ່ປະຕິບັດບັນດາກົນໄກຜ່ອນຜັນ ດ້ານອັດຕາພາສີຂາເຂົ້າ ເຊິ່ງກັນ ແລະ ກັນ ສຳລັບສິນຄ້າທີ່ມີແຫລ່ງກຳເນີດຈາກສອງປະເທດ ແລະ ຄົ້ນຄ້ວາເປີດກ້ວາງລາຍການສິນຄ້າທີ່ໄດ້ ຮັບອັດຕາພາສີ ຂາເຂົ້າ 0% ຕາມທີ່ໄດ້ຕົກລົງກັນ.

2. ສອງຝ່າຍສືບຕໍ່ປະຕິບັດອະນຸສັນຍາ ວ່າດ້ວຍການແລກປ່ຽນສິນຄ້າ ຂອງປະຊາຊົນ ຢູ່ເຂດຊາຍ ແດນລາວ - ຫວຽດນາມ,ເພີ່ມທະວີການຮ່ວມມື ດ້ານການຈັດຕັ້ງ ແລະ ຄຸ້ມຄອງຕະຫລາດຊາຍແດນ ແລະ ປະສານສົມທົບສະກັດກັ້ນ ການຄ້າຂາຍ ຫລົບຫລີກໜີພາສີ ແລະ ການຄ້າຂາຍທີ່ຜິດກົດໝາຍ;

+ ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າລາວ ແລະ ກະຊວງການຄ້າຫວຽດນາມ ຄົ້ນຄ້ວາ ນຳສະເໜີລັດຖະບານສອງປະເທດ ກ່ຽວກັບແຜນໂຄງການພັດທະນາການຄ້າລາວ - ຫວຽດນາມ ໄລຍະ 2007 - 2015 ຕາມເປົ້າໝາຍເພີ້ມມູນຄ່າ ຂາອອກ - ຂາເຂົ້າ ລະຫວ່າງ ສອງປະເທດ ໃນປີ 2010ໃຫ້ບັນລຸ 01 ຕື້ ໂດລາສະຫະລັດ, ເຖິງປີ 2015 ໃຫ້ບັນລຸ 02ຕື້ ໂດລາສະຫະລັດ .

+ ຊຸກຍູ້ການກວດກາສິນຄ້າ ແລະ ພາຫະນະຂົນສົ່ງສິນຄ້າຕາມຮູບການ " **ກວດກາຢູ່ຈຸດດຽວ**", ຢູ່ດ່ານ ສາກົນແດນສະຫວັນ - ລາວບາວ ໃຫ້ສອດຄ່ອງກັບຂໍ້ກຳນົດຂອງຂອບການຮ່ວມມືGMS, ສືບຕໍ່ຮ່ວມມືສ້າງ ຕົວແບບ " **ເຂດເສດຖະກິດການຄ້າແດນສະຫວັນ - ລາວບາວ** ".

- ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າລາວ ແລະ ກະຊວງການຄ້າຫວຽດນາມ ນຳສະເໜີ ສອງລັດຖະບານ ກ່ຽວກັບການດັດແປງ, ເພີ່ມເຕີມສັນຍາວ່າດ້ວຍສິນຄ້າຜ່ານແດນ ລະຫວ່າງ ສອງປະເທດ.

- ຫວຽດນາມສືບຕໍ່ສະໜັບສະໜູນ ແລະ ຊ່ວຍລາວ ໃນການເຂົ້າເປັນສະມາຊິກ ຂອງອົງການ ການຄ້າໂລກ (WTO) ແລະ ເວທີຮ່ວມມືເສດຖະກິດ ອາຊີ - ປາຊີຟິກ (APEC).

3. **ສືບຕໍ່ປະສານສົມທົບ**ປະຕິບັດການຊຳລະສະສາງ ລະຫວ່າງ ສອງປະເທດ ດ້ວຍສະກຸນເງິນກີບ ລາວ (LAK) ແລະ ສະກຸນເງິນດົ່ງຫວຽດນາມ(VND).

4. ສືບຕໍ່ຊຸກຍູ້ການຮ່ວມມື ໃນຂົງເຂດການລົງທຶນ ດ້ວຍການໃຫ້ບູລິມະສິດ, ຜ່ອນຜັນຕາມຄວາມ ອາດສາມາດສູງສຸດ ບົນຈິດໃຈການພົວພັນມິດຕະພາບແບບພິເສດ ລະຫວ່າງ ສອງປະເທດ ໂດຍສຸມໃສ່ ການຊອກຄົ້ນ, ສຳຫລວດແຮ່ທາດຕ່າງໆ ເພື່ອຮັບໃຊ້ເປົ້າໝາຍການພັດທະນາ ເສດຖະກິດ - ສັງຄົມ ແລະ ຜັນຂະຫຍາຍໂຄງການຊ່ວຍເຫລືອ ແລະ ຮ່ວມມືລົງທຶນຈຳນວນໜຶ່ງ ລະຫວ່າງ ສອງປະເທດ ໃນຂົງເຂດ ທໍລະນີສາດ - ບໍ່ແຮ່ ແລະ ພະລັງງານໄຟຟ້າ.

5. ຕາມການສະເໜີ ຂອງຝ່າຍຫວຽດນາມ, ຝ່າຍລາວສືບຕໍ່ປະຕິບັດ ແລະ ພິຈາລະນາກ່ຽວກັບ ການຫລຸດຜ່ອນຄ່າບໍລິການການພັກຢູ່ອາໄສ ແລະ ເຮັດວຽກໃຫ້ສອດຄ່ອງກັບລາຍຮັບ ຂອງແຮງງານຫວຽດ ນາມ ທີ່ມາເຮັດວຽກຢູ່ລາວ.

6. **ສອງຝ່າຍ**ເພີ້ມທະວີການເຄື່ອນໄຫວສົ່ງເສີມ, ໂຄສະນາການທ່ອງທ່ຽວ, ຄົ້ນຄ້ວາສ້າງບັນດາລາຍ ການທ່ອງທ່ຽວ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ພົນລະເມືອງສອງປະເທດ ແລະ ນັກທ່ອງທ່ຽວ ຈາກປະເທດທີ່ສາມ ໄປ - ມາ ດ້ວຍພາຫະນະທາງບົກ, ທາງອາກາດ; ປະສານສົມທົບກັບ ຝ່າຍກຳປູເຈຍ ເພື່ອພ້ອມກັນປະຕິບັດລາຍ ການທ່ອງທ່ຽວ " **ສາມປະເທດເປັນຈຸດທ່ອງທ່ຽວອັນດຽວ** ".

ມາດຕາ 7

ຂົງເຂດການເຊື່ອມຕໍ່ລະບົບພື້ນຖານໂຄງລ່າງ ລະຫວ່າງ ສອງປະເທດ

1. **ດ້ານ ການຄົມມະນາຄົມ ຂົນສົ່ງ:**

- ຝ່າຍຫວຽດນາມສືບຕໍ່ສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ຝ່າຍລາວນຳໃຊ້ບັນດາເສັ້ນທາງ ອອກສູ່ທະເລ ແລະ ທ່າເຮືອຕ່າງໆຂອງຫວຽດນາມ, ຫລຸດຜ່ອນຄ່າທຳນຽມ ກ່ຽວກັບການນຳໃຊ້ທ່າເຮືອ

ຫວ້ງອ່າງ, ແນໃສ່ດຶງດູດສິນຄ້າຜ່ານແດນຂອງລາວ ແລະ ບາງປະເທດຢູ່ໃນພາກພື້ນຜ່ານລາວ ແລະ ຫວຽດນາມ; ຕາມທີ່ໄດ້ຕົກລົງກັນ.

- ສອງຝ່າຍປະສານສົມທົບດັດແກ້ ສັນຍາ, ອະນຸສັນຍາການຂົນສົ່ງທາງບົກ ແລະ ເນື້ອໃນຕ່າງໆ ທີ່ກ່ຽວຂ້ອງກັບ **" ຂໍ້ຕົກລົງວຽງຈັນ2002 "** ໃຫ້ສອດຄ່ອງກັບ ບັນດາຂໍ້ກຳນົດທີ່ໄດ້ເຊັນກັນ ໃນຂອບຂອງອະນຸພາກພື້ນແມ່ນ້ຳຂອງ (GMS) ແລະ ສະພາບການຕົວຈິງ ຂອງແຕ່ລະປະເທດ.

- ສອງຝ່າຍສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແກ່ການຮ່ວມມື, ຮ່ວມທຸລະກິດ ລະຫວ່າງ ບໍລິສັດການບິນລາວ ແລະ ບໍລິສັດການບິນຫວຽດນາມ ແລະ ການບໍລິການການບິນ ລະຫວ່າງ ສອງປະເທດ; ຄົ້ນຄ້ວາການສະເໜີຂອງຝ່າຍລາວ ກ່ຽວກັບການເປີດເສັ້ນບິນໂດຍກົງ ຮ່າໂน่ย - ປາກເຊ.

- ສອງຝ່າຍປະສານສົມທົບ ສະເໜີຮູບການລົງທຶນລະອຽດ ໃຫ້ແກ່ໂຄງການສ້ອມແປງ , ຍົກລະດັບເສັ້ນທາງ 2E (ເມືອງ ຂວາ - ໄຕຈາງ) ຢູ່ ພາກເໜືອລາວ ແນໃສ່ສ້າງເງື່ອນໄຂສະດວກໃຫ້ແກ່ການໄປມາຫາສູ່ກັນ.

2. ດ້ານ ພະລັງງານໄຟຟ້າ :

- ຝ່າຍຫວຽດນາມສືບຕໍ່ ສະໜອງກະແສໄຟຟ້າ ໃຫ້ແກ່ລາວ ຢູ່ເຂດຊາຍແດນຕິດ ກັບຫວຽດນາມ ຕາມຂໍ້ຜູກພັນທີ່ໄດ້ເຊັນກັນໃນເດືອນ 09 ແລະ ເດືອນ 12 ປີ 2006 ລະຫວ່າງ ກະຊວງພະລັງງານ ແລະ ບໍ່ແຮ່ຂອງລາວ ແລະ ກະຊວງອຸດສາຫະກຳຫວຽດນາມ ແລະ ພິຈາລະນາຄວາມອາດສາມາດຂາຍໄຟຟ້າ ໃຫ້ແກ່ ບາງເຂດອື່ນໆ ຕາມຄວາມຕ້ອງການຂອງຝ່າຍລາວ.

- ສືບຕໍ່ສ້າງເງື່ອນໄຂໃຫ້ ບັນດາຫົວໜ່ວຍທຸລະກິດຫວຽດນາມ ປະຕິບັດໂຄງການລົງທຶນກໍ່ສ້າງ ເຂື່ອນໄຟຟ້ານ້ຳຕົກ ເຊຊະໝານ3, ກຸ່ມໂຄງການເຊຊະໝານ1 ລວມທັງເຊຊະໝານຊານໄຊ(ເຊຊະໝານ0) ແລະ ກະກຽມບັນດາໂຄງການລົງທຶນ ກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ເຊຊະໝານ 4, ນ້ຳກັ່ນ, ດັກອີເມັນ, ເຊກອງ 3 (ຕອນເທິງ ແລະ ຕອນລຸ່ມ) ຕາມທີ່ໄດ້ຕົກລົງກັນ.

- ສອງຝ່າຍສືບຕໍ່ຮ່ວມມື ຄົ້ນຄ້ວາສ້າງບັນດາສະຖານີ ແລະ ລະບົບເຊື່ອມຕໍ່ສາຍສົ່ງໄຟຟ້າ 115 KV ຈາກ ເຊຊະໝານ 3 ຫາ ແຂວງ ເຊກອງ ແລະ ຈາກເຊຊະໝານ 1 ຫາ ແຂວງ ອັດຕະປື; ຊອກແຫລ່ງທຶນ ເພື່ອກໍ່ສ້າງສະຖານນີໄຟຟ້າ 500 KV ຢູ່ ອັດຕະປື ແລະ ສາຍສົ່ງໄຟຟ້າ 500 KV ເຊື່ອມຕໍ່ ລະຫວ່າງ ສອງປະເທດ.

- ຜັນຂະຫຍາຍ, ຈັດຕັ້ງປະຕິບັດສັນຍາຮ່ວມມື ດ້ານພະລັງງານໄຟຟ້າ ແລະ ບໍ່ແຮ່ ທີ່ໄດ້ເຊັນກັນຄັ້ງ ວັນທີ 19 ເດືອນ 12 ປີ 2006 ທີ່ນະຄອນຫລວງວຽງຈັນ ໂດຍໄວ.

3. ດ້ານ ໂທລະຄົມມະນາຄົມ:

ສອງຝ່າຍສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຮ່ວມມື,ຮ່ວມທຸລະກິດ ລະຫວ່າງ ບັນດາ ບໍລິສັດໂທລະຄົມມະນາຄົມຂອງລາວ ກັບ ສະຫະບໍລິສັດໂທລະຄົມມະນາຄົມຫວຽດນາມ (Viettel).

ມາດຕາ 8:

ຍົກລະດັບຄວາມສາມາດ ແລະ ບູລະນະຮັກສາບັນດາກິດຈະການ, ໂຄງການຮ່ວມມື

1. ສືບຕໍ່ປັບປຸງ, ບູລະນະຮັກສາ ແລະ ຍົກລະດັບຄວາມສາມາດ ສຳລັບບັນດາກິດຈະການ, ໂຄງການຮ່ວມມື ລະຫວ່າງ ສອງປະເທດໃນເມື່ອກ່ອນ, ແນໃສ່ເສີມຂະຫຍາຍປະສິດທິຜົນ ຂອງກິດຈະການ, ໂຄງການໃຫ້ຍືນຍົງ.

2. ສອງຝ່າຍຕິດຕາມຊຸກຍູ້ ການປະຕິບັດບັນດາກິດຈະການ, ໂຄງການຈຳນວນໜຶ່ງ ທີ່ໄດ້ບັນຈຸທຶນຄືນຖ້ວນໃນຊຸມປີກ່ອນນີ້ ໃຫ້ສຳເລັດຢ່າງຂາດຕົວ, ຄົບຊຸດ ເພື່ອເອົາເຂົ້າສູ່ການນຳໃຊ້ໂດຍໄວ, ເຊັ່ນ: ລະບົບຊົນລະປະທານດົງໂພສີ, ລະບົບຊົນລະປະທານທ່າພະ - ໜອງພົງ; ລະບົບຊົນລະປະທານນ້ຳລ້ອງ; ໂຄງການພັດທະນາ ກະສິກຳ ແລະ ຊົນນະບົດຈຳປາສັກ; ໂຄງການກໍ່ສ້າງສະຖານີ ຖ່າຍທອດວິທະຍຸກະຈາຍສຽງ,ໂທລະພາບຢູ່ເຂດຈຳປາສັກ; ໂຄງການສ້ອມແປງຍົກລະດັບ ສະຖາບັນການເມືອງ - ການປົກຄອງ ແຫ່ງຊາດທ່າງ່ອນໄລຍະ I ; ໂຄງການສູນວັດແທກແຫ່ງຊາດ ຂອງລາວ ແລະ ອື່ນໆ...

3. ສອງຝ່າຍພິຈາລະນາ ແລະ ຕົກລົງເພີ່ມເຕີມທຶນຢ່າງຄົບຊຸດ ໃຫ້ແກ່ໂຄງການຈຳນວນໜຶ່ງ ຍ້ອນມີການດັດແກ້ຈຸດປະສົງການນຳໃຊ້ ... ແນ່ໃສ່ສ້າງເງື່ອນໄຂສະດວກ ໃຫ້ແກ່ບັນດາໂຄງການດັ່ງກ່າວ ເສີມຂະຫຍາຍປະສິດທິຜົນໂດຍໄວ.

ມາດຕາ 9 :

ການປະສານສົມທົບ ກົນໄກນະໂຍບາຍການຮ່ວມມື

1. ສອງຝ່າຍປະສານສົມທົບປັບປຸງ **" ຂໍ້ຕົກລົງກ່ຽວກັບລະບຽບການເງິນ ແລະ ການຄຸ້ມຄອງ ບັນດາກິດຈະການ, ໂຄງການທີ່ນຳໃຊ້ທຶນຊ່ວຍເຫລືອລ້າຂອງຫວຽດນາມໃຫ້ແກ່ລາວ"** ໃຫ້ສົມບູນ, ໂດຍສອດຄ່ອງກັບກົນໄກນະໂຍບາຍທີ່ປະກາດໃຊ້ໃນປະຈຸບັນຂອງແຕ່ລະປະເທດ,ແນໃສ່ທັງຮັບປະກັນການຄຸ້ມຄອງ ໂຄງການໃຫ້ເຂັ້ມງວດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການປະຕິບັດບັນດາກິດຈະການ, ໂຄງການໄດ້ໄວ, ກະທັດຮັດ ແລະ ຂາດຕົວ; ປະຕິບັດຂໍ້ຕົກລົງ ກ່ຽວກັບການນຳໃຊ້ທຶນຊ່ວຍເຫລືອລ້າ ຂອງ ຫວຽດນາມໃຫ້ແກ່ລາວ ບົນຫຼັກການທຸກຂໍ້ຕົກລົງຮ່ວມມືສອງຝ່າຍ ລະຫວ່າງ ບັນດາກະຊວງ,ຂະແໜງການ, ທ້ອງຖິ່ນ, ບັນດາການຈັດຕັ້ງ, ອົງການມະຫາຊົນ ແມ່ນຕ້ອງໄດ້ຮັບການຕົກລົງເຫັນດີ ຈາກລັດຖະບານສອງ ປະເທດກ່ອນຈຶ່ງຈະລົງນາມນຳກັນໄດ້, ພ້ອມກັນນັ້ນກໍ່ສົ່ງເສີມ ບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ, ບັນດາການຈັດຕັ້ງ ແລະ ອົງການມະຫາຊົນ ສືບຕໍ່ຮ່ວມມືຊ່ວຍເຫລືອເຊິ່ງກັນ ແລະ ກັນ ຕາມເງື່ອນໄຂ ແລະ ຄວາມອາດສາມາດຕົວຈິງ ຂອງຂະແໜງການ, ທ້ອງຖິ່ນ ແລະ ອົງການຂອງຕົນ.

2. ປະຕິບັດ ແລະ ປັບປຸງເພີ້ມເຕີມບາງເນື້ອໃນ " **ຂໍ້ຕົກລົງວຽງຈັນ 2002** " ໃຫ້ສອດຄ່ອງກັບ ສະພາບການຕົວຈິງຂອງແຕ່ລະປະເທດ. ເພີ້ມທະວີບົດບາດເປັນໃຈກາງ, ສັງລວມ, ປະສານງານໃນບັນດາ ຂົງເຂດການຮ່ວມມື ຂອງສອງຄະນະກຳມາທິການຮ່ວມມືລາວ - ຫວຽດນາມ ແລະ ຫວຽດນາມ - ລາວ; ແກ້ໄຂບັນດາບັນຫາທີ່ເກີດຂຶ້ນ, ບັນຫາທີ່ຂ້ອງຄາຕ່າງໆ ທີ່ພົວພັນເຖິງການຮ່ວມມື ລະຫວ່າງ ສອງປະເທດ ໃຫ້ວ່ອງໄວ ແລະ ຂາດຕົວ.

3. ສອງຝ່າຍປະສານສົມທົບປະຕິບັດບັນດາຂໍ້ຕົກລົງ ແລະ ມີທັດສະນະຄ້າຍຄືກັນ ໃນເວທີພົບປະ ແລະ ການຮ່ວມມື ໃນຂອບ ASEAN, GMS, MRC, ACMECS, CLV, CLV + J, CLMV,... ເຂົ້າສູ່ ເປົ້າໝາຍການພັດທະນາ ແລະ ການຮ່ວມມື ຂອງສອງປະເທດ.

ມາດຕາ 10
ການຈັດຕັ້ງປະຕິບັດ

ສັນຍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນເຖິງມື້ເຊັນສັນຍາຄັ້ງຕໍ່ໄປ. ໃນ ໄລຍະປະຕິບັດສັນຍາສະບັບນີ້, ອາດມີການດັດແປງ ເພີ້ມເຕີມໄດ້ ກໍຕໍ່ເມື່ອມີການຕົກລົງເປັນລາຍລັກອັກ ສອນ ຂອງລັດຖະບານສອງປະເທດ. ບັນດາສາລະບານ ເລກ 1, 2, 3 ທີ່ຄັດຕິດມາພ້ອມນີ້ແມ່ນສ່ວນປະ ກອບທີ່ບໍ່ສາມາດຕັດແຍກອອກຈາກເນື້ອໃນຂອງສັນຍາສະບັບນີ້ໄດ້.

ເຮັດທີ່ນະຄອນຫລວງຮ່າໂນ້ຍ,ວັນທີ 07 ມັງກອນ(01) ປີ 2007, ເປັນສອງສະບັບຕົ້ນດ້ວຍສອງ ພາສາ, ພາສາລາວ ແລະ ພາສາຫວຽດນາມ, ທັງສອງສະບັບ ລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

ຕາງໜ້າ ລັດຖະບານ	ຕາງໜ້າລັດຖະບານ
ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ	ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ໜງວ໋ຽນ ຊີ ຮຸ່ງ,	ສົມສະໜາດ ເລ່ັງສະໜວັດ
ຮອງ ນາຍົກລັດຖະມົນຕີ ຜູ້ປະຈຳການ	ຮອງ ນາຍົກລັດຖະມົນຕີ ຜູ້ປະຈຳການ

ສາລະບານ ເລກ 1

ແຜນການນຳໃຊ້ທຶນຊ່ວຍເຫຼືອ ຂອງ ລັດຖະບານ ຫວຽດນາມ ໃຫ້ແກ່ລັດຖະບານລາວ ປີ 2007

ຫົວໜ່ວຍ: ລ້ານ VND

ລ/ດ	ລາຍການ	ຈຳນວນເງິນ	ໝາຍເຫດ
	ຈຳນວນເງິນຊ່ວຍເຫຼືອປີ 2007	180.000	
	● ບັນດາໂຄງການ, ໂຄງການສືບຕໍ່		
1	- ໂຄງການ ກໍ່ສ້າງພະນັກງານ , ນັກສຶກສາລາວ ຮຽນຢູ່ຫວຽດນາມ ແລະ ລູກຫຼານ ຊາວຫວຽດນາມ ຕ່າງດ້າວ 10 ທຶນ.	95.000	ຂະແໜງການແລະລະບົບ ການຮຽນລະບຸລະອຽດ ໃນສາລະບານເລກ 2 ສັນຍາສະບັບນີ້
2	- ໂຄງການສຳເລັດຊຸດ ກໍ່ສ້າງພະນັກງານ ການເງິນ ຢູ່ລາວ	1.000	
3	- ໂຄງການ ເພີ້ມເຕີ່ມ ແລະ ກໍ່ສ້າງສຳເລັດ ໂຮງຮຽນ ວິຊາຊີບ ແຂວງ ບໍ່ແກ້ວ	10.000	
4	- ໂຄງການກໍ່ສ້າງສຳເລັດໂຮງຮຽນພອນສະຫວັນ ແລະ ກຽມມະຫາວິທະຍາໄລວຽງຈັນ.	11.000	
5	- ໂຄງການສຳເລັດ ການສຳຫລວດ, ຕີລາຄາແຮ່ ບົກຊິດ ແລະ ບັນດາ ແຮ່ທາດອື່ນໆ ຢູ່ພາກໄຕ້ລາວ	5.000	
	● **ໂຄງການກະກຽມ ແລະ ປະຕິບັດປີ 2007:**	**58.000**	
1	-ໂຄງການກໍ່ສ້າງໂຮງຮຽນການເງິນດ້ຽຄຳຊ້າງ ນະຄອນຫຼວງວຽງຈັນ	20.000	2007-2009
2	-ໂຄງການກໍ່ສ້າງສູນຝຶກກິລາແຫ່ງຊາດລາວ (ວຽງຈັນ)	15.000	2007-2008 (4 ລ້ານໂດລາສະຫະລັດ)
3	- ໂຄງການສ້ອມແປງ, ຍົກລະດັບຫໍພິພິຕະພັນ ໄກສອນ ພົມວິຫານ	15.000	ປະຕິບັດໃຫ້ສຳເລັດໂຄງ ການຢ່າງຊາດຕິວ
4	-ໂຄງການຮຽບຮຽງປຶ້ມມູນເຊື້ອການພົວພັນພິເສດ ລາວ-ຫວຽດນາມ(ສ່ວນວຽກທີ່ຝ່າຍລາວຮັບຜິຊອບ)	1.000	ສ່ວນວຽກທີ່ຫວຽດນາມຮັບ ຜິດຊອບແມ່ນນຳໃຊ້ທຶນ ຊ່ວຍເຫຼືອຮ່ວມມື
5	- ໂຄງການແປນິພົນ ມາກ - ອັງແກນ, ເລນິນ, ແນວຄິດໂຮ່ຈິ ມິນ ເປັນພາສາລາວ	2.000	2007 - 2010

6	- ໂຄງການຍົກລະດັບຄວາມສາມາດໃຫ້ແກ່ຂະແໜງການສານ ປະຊາຊົນສູງສຸດຂອງລາວ.	2.000	2007- 2008
7	- ໂຄງການຍົກລະດັບຄວາມສາມາດຂະແໜງກົດລັບລາວ	3.000	2007-2008
	● <u>ບັນດາ ໂຄງການປະຕິບັດໄລຍະກະກຽມໂຄງການໃນປີ 2007 (ນຳໃຊ້ແຫຼ່ງທຶນສະນັບສະໜູນຮ່ວມມື ເພື່ອບັນຈຸ).</u>		
1	- ໂຄງການກໍ່ສ້າງໂຮງຮຽນມັດທະຍົມສຶກສາ ນະຄອນຫຼວງ ວຽງຈັນ (ຂອງຂວັນຂອງທ່ານເລຂາທິການໃຫຍ່)		
2	- ໂຄງການກະກຽມກໍ່ສ້າງ ສູນສຳເນົາແຫ່ງຊາດ		2007-2010
3	- ໂຄງການກະກຽມ ລົງທຶນກໍ່ສ້າງໂຮງຮຽນສີລະປະຊັ້ນສູງ ແຫ່ງຊາດ ວຽງຈັນ		2007-2010
4	- ໂຄງການ ກໍ່ສ້າງສູນເຕັກນິກອາຍາ, ກະຊວງ ປ້ອງກັນຄວາມສະຫງົບ ວຽງຈັນ		2007-2008
5	- ໂຄງການ ກະກຽມລົງທຶນ ກໍ່ສ້າງ ບາງກິດຈະການ (ຫ້ອງຮຽນ, ຫ້ອງ ທົດລອງ, ທາງຍ່າງ, ຫໍພັກນະວິທະຍາໄລ ແພດສາດ ວຽງຈັນ)		2007-2009
6	- ໂຄງການພັດທະນາຂະແໜງການປະມົງລາວ		2007-2010
7	- ໂຄງການແບ່ງເຂດກະສິກຳທົ່ວປະເທດລາວ		2007-2010
8	- ໂຄງການກະກຽມ ກໍ່ສ້າງຖານຂໍ້ມູນ ຂ່າວສານ ພູມສາດ ແຫ່ງຊາດລາວ ຮັບໃຊ້ຕິດຕາມຊັບພະຍາກອນທຳ ມະຊາດ, ປົກປັກຮັກສາສິ່ງແວດລ້ອມ ແລະ ເຮັດ ໃຫ້ທັນສະໄໝ ວຽກງານຄຸ້ມຄອງລັດ ຢູ່ ສປປ ລາວ.		2007-2010
9	-ໂຄງການກໍ່ສ້າງບົດວິພາກເສດຖະກິດ - ເຕັກນິກ ເສັ້ນທາງ ລົດໄຟ ທ່າແຂກ - ມຸນຢ		2007-2010 (70.000 ໂດລາສະຫະລັດ)

ແຕ່ລະໂຄງການບັນຈຸ 300 ລ້ານ ຫວຽດນາມດົ່ງ ຈາກແຫຼ່ງງົບປະມານຊ່ວຍໜູນຮ່ວມມື

ສາລະບານ ເລກ 2

ແສນບໍ່ລຸ-ກໍ່ສ້າງພະນັກງານ, ນັກສຶກສາລາວຢູ່ ສສ ຫວຽດນາມປະຈໍາປີ 2007

ລ/ດ	ຊື່ຂະແໜງການຕ່າງໆ ແລະ ວິຊາຮຽນ	ຈໍານວນລວມ	ໄລຍະຍາວ			ໄລຍະສັ້ນ		ໝາຍເຫດ	
			ດີ	ໂທ	ເອກ	ຈໍານວນຫົນ	ກໍານົດເວລາ	ພ/ງ	ນັກສຶກສາ
I	**ຂົງເຂດການເມືອງແລະ ອົງການມະຫາຊົນ**	131		15	7	109		ພ/ງ	
1	ທິດສະດີການເມືອງ	40		15	5	20	5ເດືອນ	ພ/ງ	
2	ການປົກຄອງ(ສະຖາບັນການປົກຄອງແຫ່ງຊາດ)	22			2	20	3 ເດືອນ	ພ/ງ	
3	ແນວລາວສ້າງຊາດ	18				18	3 ເດືອນ	ພ/ງ	
4	ວຽກງານຈັດຕັ້ງ	17				17	3 ເດືອນ	ພ/ງ	
5	ວຽກງານໂຄສະນາອົບຮົມ	17				17	3 ເດືອນ	ພ/ງ	
6	ວຽກງານກໍາມະບານ	17				17	3 ເດືອນ	ພ/ງ	
II	**ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**	170							
1	ປ້ອງກັນຊາດ(ປ້ອງກັນປະເທດ)	100							
2	ປ້ອງກັນຄວາມສະຫງົບ	70							
III	**ຄົ້ນຄ້ວາປະລິນຍາໂທ-ປະລິນຍາເອກຂົງເຂດວິທະຍາສາດຫົ່ວໄປ**	66		46	20				
1	**ຂະແໜງການສຶກສາ**								
-	ບໍລິຫານການສຶກສາ			1	1			ພ/ງ	
-	ອີເລັກໂຕນິກ			1	1			ພ/ງ	
-	ເຄມີສາດ			1				ພ/ງ	
-	ພູມສາດ			1				ພ/ງ	
-	ຄະນິດສາດ			1	1			ພ/ງ	
-	ຊີວະສາດ			1				ພ/ງ	
-	ວັນນະຄະດີ			1	1			ພ/ງ	
-	ຟີຊິກ			1				ພ/ງ	
-	ປະຫວັດສາດ			1	1			ພ/ງ	
2	**ຂະແໜງກະສິກໍາ -ປ່າໄມ້.**								
-	ກະສິກໍາປ່າໄມ້			1					ສຶກສາ
-	ຈໍາແນກພັນໄມ້			1				ພ/ງ	
-	ຄຸ້ມຄອງນໍ້າໃຊ້ຊົນລະປະທານ				1			ພ/ງ	
-	ການລ້ຽງສັດ			1				ພ/ງ	
3	**ອຸດສາຫະກໍາ-ການຄ້າ**							ພ/ງ	
-	ເສດຖະກິດການຄ້າ			1	1			ພ/ງ	
-	ຄຸ້ມຄອງອຸດສາຫະກໍາ				1			ພ/ງ	
-	ກິດໝາຍການຄ້າ			1				ພ/ງ	
-	ເສດຖະສາດ (ບໍລິຫານທຸລະກິດ)			1	1				
4	**ຂະແໜງແສນການ**							ພ/ງ	
-	ວາງແຜນເສດຖະກິດ ແລະ ຄຸ້ມຄອງເສດຖະກິດແສນການ			1	1				
5	**ສໍາມ້ໍາເອກກະສານແຫ່ງລັດ**								
-	ວິທະຍາສາດ ແລະ ມະນຸດສາດ			1					
6	**ການທະນາຄານ**							ພ/ງ	
-	ການເງິນທະນາຄານ			2	1			ພ/ງ	
-	ທະນາຄານ			1				ພ/ງ	
7	**ຂະແໜງຖະແຫຼ່ງຂ່າວ-ວັດທະນະທໍາ**							ພ/ງ	

ລ/ດ	ຊື່ຂະແໜງການຕ່າງໆ ແລະ ວິຊາຮຽນ	ຈຳນວນລວມ	ໄລຍະຍາວ			ໄລຍະສັ້ນ		ໝາຍເຫດ	
			ຕີ	ໂທ	ເອກ	ຈຳນວນຫົນ	ກຳນົດເວລາ	ພ/ງ	ນັກສຶກສາ
-	ນັກຂ່າວ			1				ພ/ງ	
-	ເຕັກນິກສື່ມວນຊົນ			1	1				
8	**ຂະແໜງພະລັງງານບໍ່ແຮ່**								
-	ວິສະວະກຳບໍ່ແຮ່			2	1			ພ/ງ	
-	ຄຸ້ມຄອງສິ່ງແວດລ້ອມ			1					ການຄ້າ
-	ອຸດສະຫະກຳໄຟຟ້າ			2					ສຶກສາ
-	ທໍລະນີສາດ			1					ສຶກສາ
9	**ຂະແໜງຍຸຕິທຳ**								
-	ກົດໝາຍ			3	1			ພ/ງ	ມ/ລເຫັ
10	**ຂະແໜງການຕ່າງປະເທດ**								
-	ການພົວພັນຕ່າງປະເທດ			3				ພ/ງ	
-	ກົດໝາຍສາກົນ			1					
11	**ການເງິນ**								
-	ຂະແໜງການເງິນ			4	1				
-	ເສດຖະກິດການເງິນ			2	1				
12	**ຂະແໜງສາທາລະນະສຸກ**								
-	ການແພດພື້ນເມືອງ				1				
-	ຄວາມປອດໄພອາຫານ			1					
-	ການຄຸ້ມຄອງຕົ້ນໄມ້ທີ່ເປັນຢາ			1					
-	ສາທາລະນະສຸກສາດ				1				
-	ໝູ , ຄໍ , ດັ່ງ			1					
13	**ຂະແໜງຄົ້ນຄະບາຄົ້ນ**								
-	ໂທລະຄົ້ນ			1	2				
-	ວິສະວະກຳກໍ່ສ້າງ-ຂົວທາງ			1					
IV	**ຂົງເຂດການສຶກສາ, ວັດທະນະທຳຕຸລາການ**	60							
1	ວິທີສິດສອນຄະນິດສາດມັດທະຍົມຕົ້ນ	15					3 ເດືອນ		
2	ບໍລິຫານການສຶກສາລະດັບໂຮງຮຽນ	15					3 ເດືອນ		
3	ວຽກງານສານປະຊາຊົນສູງສຸດ	15					3 ເດືອນ		
4	ວຽກງານແສນການ	15					3 ເດືອນ		
V	ກຽມພາສາຫວຽດນາມເພື່ອເຂົ້າຮຽນມະຫາວິທະຍາໄລ(ລວມທັ້ງໜ່ວຍໂຍບາຍ50ຄົນ)	173							
1	ວຽກງານຈັດຕັ້ງຢູ່ສະຖາບັນການເມືອງເຂດໜຶ່ງ	20	20						ພະນັກງ
2	ວຽກງານການເມືອງ(ຢູ່ສະຖາບັນຂ່າວສານ)	20	20						ພະນັກງ
3	ວຽກງານການປົກຄອງ(ຢູ່ສະຖາບັນການປົກຄອງແຫ່ງຊາດ)	20	20						ພະນັກງ
4	**ຂະແໜງກະສິກຳ**								
-	ຊົນລະປະທານ, ການຄຸ້ມຄອງນ້ຳໃຊ້		2						
-	ດ້ານແມງໄມ້		2						
-	ວິຊາສັດຕະວະແພດ		2						
-	ວິຊາອຸຕຸນິຍົມ ແລະ ອຸທົກນາສາດ		1						
-	ລ້ຽງສັດ		2						
5	**ຂະແໜງພະລັງງານບໍ່ແຮ່**								
-	ສ້າງວາດແຮ່		5						
-	ປຸ້ງແຕ່ງແຮ່		5						
-	ຂຸດຄົ້ນແຮ່		5						
-	ວິໄຈແຮ່		5						

ລະດັບ	ຊື່ຂະແໜງການຕ່າງໆ ແລະ ວິຊາຮຽນ	ຈຳນວນລວມ	ໄລຍະຍາວ			ໄລຍະສັ້ນ		ໝາຍເຫດ	
			ຕີ	ໂທ	ເອກ	ຈຳນວນຫົນ	ກຳນົດເວລາ	ພ/ຈ	ນັກສຶກສາ
-	ໄຟຟ້າຄວາມຮ້ອນ		3						
-	ໄຟຟ້ານ້ຳຕົ້ມ		4						
-	ຄຸ້ມຄອງເສດຖະກິດພະລັງງານ		3						
6	**ຂະແໜງແສນການ**								
-	ວິຊາສະຖິຕິ		2						
7	**ຂະແໜງຖະແຫຼງຂ່າວ**								
-	ວິຊານັກຂ່າວ(ຂ່າວສານ)		4						
-	ພິມຈຳໜ່າຍ		3						
-	ວິຊາວິຈິດສິນ		2						
8	**ຂະແໜງການຄ້າ ແລະ ອຸດສະຫະກຳ**								
-	ວິຊາບໍລິຫານທຸລະກິດ(ຂະແໜງການຄ້າ)		2						
-	ວິຊາກົດໝາຍການຄ້າ		3						
-	ເສດຖະກິດການຄ້າ		3						
-	ວິຊາການຄ້າຕ່າງປະເທດ		3						
-	ວາງແຜນອຸດສະຫະກຳ		2						
-	ອຸດສະຫະກຳປຸ໋ງແຕ່ງ		3						
9	**ຂະແໜງທ່ອງທ່ຽວ ແລະບໍລິການ**								
-	ຄຸ້ມຄອງການທ່ອງທ່ຽວ		2						
-	ເສດຖະກິດທ່ອງທ່ຽວ		2						
-	ທ່ອງທ່ຽວ ແລະ ໂຮງແຮມ		2						
10	**ຂະແໜງທະນາຄານ**								
-	ທະນາຄານ		3						
-	ບັນຊາການເງິນສິນເຊື່ອ ແລະ ຕະຫຼາດຫຸ້ນ		3						
11	**ຂະແໜງຕ່າງປະເທດ**								
-	ແປພາສາຫວຽດນາມ		4						
-	ກົດໝາຍສາກົນ		3						
-	ພົວພັນເສດຖະກິດສາກົນ		2						
12	**ຂະແໜງກຳມະບານ**								
-	ກຳມະບານ		4						
13	**ຂະແໜງສັ້ງລວມ**								
-	ສຳເນົາເອກກະສານ		3						
-	ກົດລັບ		3						
14	**ຂະແໜງສາທາລະນະສຸກ**								
-	ການແພດພື້ນເມືອງ		2						
-	ຄຸ້ມຄອງອານາໄມ		2						
-	ວິເຄາະ		2						
15	**ຂະແໜງ ຄຂປ**								
-	ຂົນສົ່ງ ທາງນ້ຳ,ທາງບົກ (ທາງລົດຍົນ ແລະ ທາງລົດໄຟ)		4						
-	ໄຫລະຄົມ		2						
-	ວິສະວະກຳກໍ່ສ້າງ - ຂົວທາງ		2						
16	**ຂະແໜງສຶກສາ**								
-	ພາລະສຶກສາ		2						
-	ນັກສຶກສາ ລຸ້ນຫຼາບຊາວຫວຽດນາມຕ່າງດາວຢູ່ລາວ		10						ສອບເສັ້ງ
	ລວມທັ້ງໝົດ I, II, III, IV, V	610							

ສາລະບານ ເລກ 3

ແຜນການນຳໃຊ້ທຶນຊ່ວຍເຫຼືອ ຂອງ ລັດຖະບານ ຫວຽດນາມ ໃຫ້ແກ່ລັດຖະບານລາວ ປີ 2008-2010

ຫົວໜ່ວຍ: ລ້ານ VND

ລ/ດ	ລາຍການ	ຈຳນວນເງິນ	ໝາຍເຫດ
	● ກະກຽມບັນດາໂຄງການ, ກິດຈະການໃໝ່		
1	- ໂຄງການກໍ່ສ້າງສະຖານີ ຮັບສົ່ງໂທລະພາບລາວ ຢູ່ ຈຳປາສັກ		ບັນດາໂຄງການທີ່ລະບຸໃນ ສາລະ ບານນີ້ຈະໄດ້ພິຈາ ລະນາໄລຍະ 2008 - 2010
2	- ໂຄງການເປີດກ້ວາງການສຳຫຼວດ ຕີລາຄາ ແຮ່ ເກືອກາລີ ແຂວງ ຄຳມ່ວນ		
3	- ໂຄງການຜັນຂະຫຍາຍ ການລ້ຽງຫຶນ ກໍ່ສ້າງ ໄລຍະ ທາງແຕນຕັນ - ສົມຫວັງ		
4	- ໂຄງການກໍ່ສ້າງພະແນກພາສາຫວຽດ ຢູ່ໂຮງຮຽນ ມະຫາວິທະຍາໄລແຫ່ງຊາດ ວຽງຈັນ		
5	-ໂຄງການ ກໍ່ສ້າງໂຮງຮຽນກຶນອນຊົນເຜົ່າ ແຂວງ ຊຽງຂວາງ		
6	-ໂຄງການ ກໍ່ສ້າງໂຮງຮຽນກຶນອນຊົນເຜົ່າ ແຂວງ ຫົວພັນ		
7	- ໂຄງການຍົກລະດັບສະຖານບັນການເມືອງການ ປົກຄອງແຫ່ງຊາດ ທ່ຽງອນ ໄລຍະ II		